**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ
ກົມຮ່ວມມື ແລະ ການເງິນສາກົນ ເລກທີ ກຮງ
ນະຄອນຫຼວງວຽງຈັນ, ວັນທີ

# ບົດລາຍງານ

**ຮຽນ: ທ່ານ ລັດຖະມົນຕີ ກະຊວງການເງິນ, ທີ່ເຄົາລົບນັບຖືຢ່າງສູງ,**
**(ໂດຍຜ່ານຮອງລັດຖະມົນຕີກະຊວງການເງິນຜູ້ຊີ້ນໍາ)**
**ເລື່ອງ: ລາຍງານຜົນຂອງກອງປະຊຸມກອງເລຂາໜ່ວຍງານຂະແໜງການເພື່ອ ປຶກສາຫາລືກັບ ຄູ່ຮ່ວມພັດທະນາ ປະຈໍາໄຕມາດ 03 ປີ 2025.**

- ອີງຕາມ ດໍາລັດວ່າດ້ວຍການຄຸ້ມຄອງ ແລະ ນໍາໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ, ສະບັບເລກ ທີ 357/ລບ, ລົງວັນທີ 09 ຕຸລາ 2019;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມການເງິນຕ່າງປະເທດ, ສະບັບເລກທີ 1666/ກງ, ລົງວັນທີ 10 ມິຖຸນາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດ ແລະ ການແຕ່ງຕັ້ງພະນັກງານ ກົມຮ່ວມມື ແລະ ການເງິນສາກົນ ແລະ ພະນັກງານໂຄງການ ຈັດປະຊຸມກອງເລຂາໜ່ວຍງານຂະແໜງການ, ສະບັບເລກທີ 2843/ກງ, ລົງວັນທີ 3 ກັນຍາ 2025.

ກົມຮ່ວມມື ແລະ ການເງິນສາກົນ, ກະຊວງການເງິນ ໃນນາມກອງເລຂາຄະນະຊີ້ນໍາລະດັບຊາດ ເພື່ອຂະບວນການໂຕະມົນ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບ: ໃນວັນທີ 4 ກັນຍາ 2025 ໄດ້ຈັດກອງປະຊຸມກອງເລຂາໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ ປະຈໍາໄຕມາດ 03 ປີ 2025 ຂຶ້ນທີ່ ແຂວງວຽງຈັນ ພາຍໃຕ້ການເປັນປະທານຂອງ ທ່ານ ປອ. ວົງຄໍາແຫ່ງ ວົງທະຈັກ ຫົວໜ້າກົມຮ່ວມມື ແລະ ການເງິນສາກົນ ກະຊວງການເງິນ, ທັງເປັນ ຫົວໜ້າກອງເລຂາຄະນະຊີ້ນໍາລະດັບຊາດ ເພື່ອຂະບວນການໂຕະມົນ ໂດຍມີຜູ້ເຂົ້າຮ່ວມຈາກກະຊວງຂະແໜງການ ໃນນາມຫົວໜ້າກອງເລຂາ ແລະ ກອງເລຂາໜ່ວຍງານຂະແໜງການ ເຂົ້າຮ່ວມ ທັງໝົດ 49 ທ່ານ ຍິງ 15 ທ່ານ, ເຊິ່ງລາຍລະອຽດດັ່ງລຸ່ມນີ້:

## I. ຈຸດປະສົງ

ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອປຶກສາຫາລື ແລະລາຍງານຄວາມຄືບໜ້າ ໃນການກະກຽມຈັດກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV; ລາຍງານການຈັດຕັ້ງປະຕິບັດ ແຜນວຽກຂອງໜ່ວຍງານຂະແໜງການ ປະຈໍາປີ 2025 ລວມທັງ ການປະກອບຄໍາເຫັນໃສ່ຮ່າງແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5ປີ ຄັ້ງທີ 10 ທີ່ໄດ້ໃຫ້ບັນດາໜ່ວຍງານຂະແໜງການປຶກສາຫາລືພາຍໃນໜ່ວຍງານ; ປຶກສາຫາລື ກ່ຽວກັບການກໍານົດແຜນວຽກບູລິມະສິດ, ກອບເວລາໃນການນໍາສົ່ງບົດລາຍງານ, ການສ້າງແຜນວຽກປະຈໍາປີຂອງ ໜ່ວຍງານຂະແໜງການ; ແລະ ການປັບປຸງໜ່ວຍງານຂະແໜງການ ພາຍຫຼັງທີ່ມີການໂຮມບັນດາກະຊວງຂະແໜງການ.

## II. ເນື້ອໃນ

ກອງປະຊຸມໄດ້ດຳເນີນໄປເປັນເວລາ 1 ວັນໂດຍພາກເຊົ້າ ມີການນຳສະເໜີຂອງແຕ່ລະໜ່ວຍງານຂະແໜງການກ່ຽວກັບຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວຽກ ບູລິມະສິດຂອງໜ່ວຍງານຕົນ; ການນຳສະເໜີຂອງພະແນກອົງການຈັດຕັ້ງສາກົນ, ກົມຮ່ວມມື ແລະ ການເງິນສາກົນ ກ່ຽວກັບຄວາມຄືບໜ້າໃນການກະກຽມກອງປະ ຊຸມໂຕະມົນລະດັບສູງ ຄັ້ງທີ XIV ເຊິ່ງສາມາດສະຫຼຸບຫຍໍ້ໄດ້ດັ່ງນີ້:

**1. ການລາຍງານຂອງບັນດາໜ່ວຍງານຂະແໜງການ**

**1. 1 ໜ່ວຍງານຂະແໜງການສຶກສາທິການ ແລະ ກິລາ**

- ໜ່ວຍງານຂະແໜງການໄດ້ຈັດກອງປະຊຸມລະດັບສູງຂອງໜ່ວຍງານຂະແໜງການອີງຕາມຄຳແນະນຳຂອງຂະບວນການໂຕະມົນ ເພື່ອຮັບຮອງການລາຍງານຂໍ້ມູນໃຫ້ກັບກອງເລຂາຂະບວນການໂຕະມົນໃນແຕ່ລະໄລຍະ. ພ້ອມກັນນັ້ນ, ໃນກອງປະຊຸມຍັງໄດ້ຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນປະຈຳປີ 2024 ເພື່ອປຶກສາຫາລືເຂົ້າໃນແຜນບູລິມະສິດຂອງຂະແໜງການ;
- ງົບປະມານທີ່ລະດົມໃສ່ຂະແໜງການສຶກສາ ເມື່ອທຽບກັບສາກົນ ໂດຍສະເພາະແມ່ນເພື່ອນບ້ານໃກ້ຄຽງ ເຫັນວ່າຍັງຢູ່ລະດັບຕ່ຳ (9-10%ຂອງລາຍຈ່າຍງົບປະມານ; ປະເທດໃກ້ຄຽງຢູ່ລະດັບ 10-15%ຂອງລາຍຈ່າຍງົບປະມານ);
- ການປະກອບສ່ວນຂອງລັດທະບານເຂົ້າໃນໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາໄດ້ກຳນົດແຕ່ເບື້ອງຕົ້ນຂອງການສ້າງໂຄງການ ແລະ ໄດ້ແລກປ່ຽນຕາມອັດຕາແລກປ່ຽນນະເວລາດັ່ງກ່າວ ເຊິ່ງເປັນກ່ອນໄລຍະເງິນເຟີ້. ເມື່ອມາເຖິງປະຈຸບັນ, ອັດຕາແລກປ່ຽນໄດ້ເໜັງຕີງ ເຮັດໃຫ້ມູນຄ່າການປະກອບສ່ວນຫຼຸດລົງເມື່ອທຽບໃສ່ສະກຸນເງິນໂດລາສະຫະລັດ ແລະເຮັດໃຫ້ງົບປະມານດັ່ງກ່າວບໍ່ພຽງພໍທີ່ຈະສາມາດສະໜັບສະໜູນການຈັດຕັ້ງປະຕິບັດກິດຈະກຳໂຄງການໃຫ້ສຳເລັດຕາມແຜນການ.

**1.2 ໜ່ວຍງານຂະແໜງການປົກຄອງ**

- ໜ່ວຍງານຂະແໜງການໄດ້ມີການຈັດກອງປະຊຸມພາຍໃນເພື່ອປຶກສາຫາລືກ່ຽວກັບການປະກອບຄຳເຫັນໃສ່ຮ່າງແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5ປີ ຄັ້ງທີ 10; ປຶກສາຫາລືກ່ຽວກັບການປະກອບຂໍ້ມູນ ແລະສະໜອງໃຫ້ກັບກອງເລຂາຂະບວນການໂຕະມົນເພື່ອກະກຽມກອງປະຊຸມໂຕະມົນລະດັບສູງຄັ້ງທີ 14; ແລະ ປຶກສາຫາລືກ່ຽວກັບການປັບປຸງກົນໄກຂອງໜ່ວຍງານຂະແໜງ ການພາຍໃນ ພາຍຫຼັງທີ່ມີການໂຮມກະຊວງ;
- ສະເໜີກອງເລຂາຂະບວນການໂຕະມົນຄົ້ນຄ້ວາ ແລະ ເປັນເຈົ້າການໃນການຈັດກອງປະຊຸມປຶກສາຫາລືກ່ຽວກັບການປັບປຸງກົນຈັກຂອງໜ່ວຍງານຂະແໜງການ ເພື່ອບໍ່ໃຫ້ກະທົບຕໍ່ການດຳເນີນ, ການປະຕິບັດແຜນວຽກ 5ປີ ຂອງໜ່ວຍງານຂະແໜງການ,ແລະ ການຜັນຂະຫຍາຍການປັບປຸງຢູ່ຂັ້ນທ້ອງຖິ່ນ.ເນື່ອງຈາກມີການຍຸດຕິການສະໜອງທຶນເຂົ້າໃນໂຄງການພັດທະນາຂອງໜ່ວຍງານຂະແໜງ ການບາງສ່ວນ ພາຍຫຼັງທີ່ມີການໂຮມກະຊວງ ຈຶ່ງເຮັດໃຫ້ມີຂໍ້ຈຳກັດທາງດ້ານງົບປະມານໃນການຈັດຕັ້ງປະຕິບັດໂຄງການ;
- ສຳເລັດການຮ່າງພາລະບົດບາດຄະນະຈັດຕັ້ງສູນກາງພັກ (ປັບປຸງ);
- ພາຍຫຼັງສຳເລັດການປັບປຸງກົນຈັກການຈັດຕັ້ງຂອງໜ່ວຍງາຂະແໜງການ, ໜ່ວຍງານຈະຈັດກອງປະຊຸມປຶກສາຫາລືເພື່ອຄົ້ນຄ້ວາ ແລະ ສະໜອງຂໍ້ມູນໃຫ້ກັບກອງເລຂາຂະບວນການໂຕະມົນ ເພື່ອກະກຽມກອງປະຊຸມໂຕະມົນລະດັບສູງ.

**1.3 ໜ່ວຍງານຂະແໜງການກວດກາ ແລະ ຄວບຄຸມຢາເສບຕິດ**

- ໜ່ວຍງານຂະແໜງການໄດ້ຈັດກອງປະຊຸມລະດັບວິຊາການຂອງໜ່ວຍງານຂຶ້ນໃນເດືອນມິຖຸນາ 2025 ທີ່ຜ່ານມາ ເພື່ອປຶກສາຫາລືແຜນວຽກບູລິມະສິດຂອງໜ່ວຍງານ ແລະ ຄົ້ນຄ້ວາປະກອບຄຳເຫັນໃສ່ຮ່າງທີ່3 ຂອງແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10;

- ກຳລັງກະກຽມກອງປະຊຸມລະດັບສູງຂອງຄະນະຄຸ້ມຄອງຢາເສບຕິດ ທີ່ຈະຈັດຂຶ້ນໃນເດືອນຕຸລາ 2025 ນີ້ ເພື່ອເປັນການກະກຽມບົດລາຍງານຂອງໜ່ວຍງານຂະແໜງການ ໃຫ້ກັບກອງເລຂາຂະບວນການໂຕະມົນໃນການກະກຽມກອງປະຊຸມໂຕະມົນລະດັບສູງ.

**1.4 ໜ່ວຍງານຂະແໜງການການຄ້າ ແລະ ພັດທະນາພາກເອກະຊົນ**

- ສຳເລັດກອງປະຊຸມລະດັບວິຊາການຂອງໜ່ວຍງານຂະແໜງການເພື່ອປຶກສາຫາລືວຽກງານບູລິມະສິດຂອງໜ່ວຍງານ ແລະ ຄົ້ນຄ້ວາປະກອບຄຳເຫັນໃສ່ຮ່າງທີ3 ຂອງແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10 ແລະ ນຳສົ່ງໃຫ້ກອງເລຂາຂະບວນການໂຕະມົນ;
- ເພື່ອປະກອບສ່ວນໃນການກະກຽມກອງປະຊຸມໂຕະມົນລະດັບສູງ, ໜ່ວຍງານຂະແໜງການໄດ້ຈັດກອງປະຊຸມລະດັບສູງຂອງໜ່ວຍງານຂະແໜງການຂຶ້ນໃນເດືອນກໍລະກົດ 2025 ເພື່ອຜ່ານຮ່າງແຜນພັດທະນາຂະແໜງອຸດສາຫະກຳ ແລະ ການຄ້າ 5 ປີ;
- ໄລຍະຜ່ານມາໜ່ວຍງານຂະແໜງການໄດ້ເອົາໃຈໃສ່ລະດົມທຶນຊ່ວຍເຫຼືອເພື່ອສຸມໃສ່ຈັດຕັ້ງປະຕິບັດແຜນພັດທະນາ 5ປີຂອງຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ໄດ້ມີການປຶກສາຫາລືກັນໃນການຄົ້ນຄ້ວາຮວມວຽກງານແຮ່ທາດ ແລະ ພະລັງງານເຂົ້າໃນວຽກງານຂອງໜ່ວຍງານຂະແໜງການ ເຊິ່ງໜຶ່ງໃນການເລີ່ມຕົ້ນທີ່ໄດ້ປຶກສາຫາລືກັນ ແມ່ນການນຳເອົາບັນຫາທີ່ພາກທຸລະກິດສະເໜີກ່ຽວກັບວຽກງານແຮ່ທາດ ແລະ ພະລັງງານ ເຂົ້າໃນກອງປະຊຸມທຸລະກິດລາວ (Lao Business Forum);
- ສຳເລັດການຮັບຮອງພາລະບົດບາດຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບປັບປຸງໃນຕົ້ນເດືອນກັນຍາ 2025 ພາຍຫຼັງທີ່ມີການໂຮມກະຊວງ;
- ຈະຈັດກອງປະຊຸມລະດັບສູງຂອງໜ່ວຍງານຂະແໜງການໃນເດືອນ 11 ແນ່ໃສ່ເຜີຍແຜ່ເນື້ອໃນຂອງແຜນພັດທະນາ 5 ປີຂອງຂະແໜງອຸດສາຫະກຳ ແລະ ການຄ້າ, ກະກຽມບົດລາຍງານຂອງໜ່ວຍງານຂະແໜງການເພື່ອສົ່ງໃຫ້ກອງເລຂາຂະບວນການໂຕະມົນ, ແລະ ປຶກສາຫາລືບັນຫາທີ່ຈະຍົກຂຶ້ນໃນກອງປະຊຸມທຸລະກິດລາວ.

**1.5 ໜ່ວຍງານຂະແໜງການເກັບກູ້ລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ**

- ສຳເລັດກອງປະຊຸມຄະນະຊີ້ນຳໜ່ວຍງານໃນເດືອນມິຖຸນາ 2025;
- ສຳເລັດກອງປະຊຸມຄະນະກຳມະການ ເກັບກູ້ລະເບີດບໍ່ທັນແຕກ (ລບຕ) ແຫ່ງຊາດ ໃນເດືອນສິງຫາ 2025 ແລະ ຈະຈັດກອງປະຊຸມຄັ້ງທີ 2 ໃນເດືອນທັນວາ 2025;
- ໃນໄລຍະຜ່ານມາມີການໂຈະການສະໜອງທຶນໄລຍະໜຶ່ງແຕ່ຕໍ່ມາໄດ້ມີການສືບຕໍ່ເປັນປົກກະຕິແລ້ວ;
- ໄດ້ມີການລະດົມທຶນຈາກປະເທດອື່ນໆຕື່ມ ເຂົ້າໃນວຽກງານເກັບກູ້ລະເບີດບໍ່ທັນແຕກ ເຊັ່ນອິນເດຍ, ເກົາຫຼີ;
- ໜ່ວຍງານຍັງມີສິ່ງທ້າທາຍໃນການຈັດຕັ້ງປະຕິບັດ ເປັນຕົ້ນແມ່ນບຸກຄະລາກອນໃນການເກັບກູ້ລະເບີດທີ່ຍັງບໍ່ທັນພຽງພໍ.

**1.6 ໜ່ວຍງານຂະແໜງການເສດຖະກິດມະຫາພາກ**

- ຈະຈັດກອງປະຊຸມຂອງໜ່ວຍງານຂະແໜງການ (ວິຊາການ ແລະ ລະດັບສູງ) ໃນເດືອນຕຸລາ 2025 ສ່ວນເນື້ອໃນກອງປະຊຸມແມ່ນຈະໄດ້ປຶກສາຫາລືກັນລະດັບວິຊາການໃນວັນທີ 5 ກັນຍາ 2025.

**1.7 ໜ່ວຍງານຂະແໜງການສາທາລະນະສຸກ**

- ຈະຈັດກອງປະຊຸມລະດັບວິຊາການຂອງໜ່ວຍງານຂະແໜງການໃນວັນທີ 10 ກັນຍາ 2025;
- ຈະຈັດກອງປະຊຸມລະດັບສູງຂອງໜ່ວຍງານຂະແໜງການໃນວັນທີ 30 ກັນຍາ 2025;

- ໃນກອງປະຊຸມລະດັບວິຊາການ ແລະລະດັບສູງຂອງໜ່ວຍງານຂະແໜງການ ຈະໄດ້ປຶກສາຫາລືກ່ຽວກັບການສະໜອງຂໍ້ມູນໃຫ້ກັບການກະກຽມກອງປະຊຸມໂຕະມົນລະດັບສູງ, ການລົງທຶນໃສ່ການພັດທະນາສັບສິນມະນຸດ, ການເຂົ້າເຖິງສາທາລະນະສຸກ ແລະ ໂພສະນາການ , ຫຼຸດຜ່ອນການຂາດສານອາຫານ, ແລະ ຍົກສູງການລະດົມທຶນເຂົ້າໃນຂະແໜງການ;
- ການຈັດຕັ້ງປະຕິບັດແຜນພັດທະນາຂອງຂະແໜງການຍັງພົບກັບສິ່ງທ້າທາຍ ເປັນຕົ້ນວ່າບຸກຄະລາກອນແພດໝໍ, ງົບປະມານ ບໍ່ພຽງພໍ;
- ໜ່ວຍງານຂະແໜງການເຫັນດີໃຫ້ມີການປັບປຸງກົນຈັກຂອງບັນດາໜ່ວຍງານຂະແໜງການພາຍໃຕ້ຂະບວນການໂຕະມົນຄືນໃໝ່ ພາຍຫຼັງທີ່ມີການໂຮມກະຊວງ.

**2. ການປຶກສາຫາລື**

ພາຍຫຼັງການລາຍງານຂອງບັນດາໜ່ວຍງານຂະແໜງການ, ກອງປະຊຸມໄດ້ເປີດເວທີໃຫ້ກັບຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳເຫັນ ແລະປຶກສາຫາລືກັນ, ສາມາດສະຫຼຸບໄດ້ດັ່ງນີ້:

**2.1 ກົມຮ່ວມມື ແລະ ການເງິນສາກົນ, ກະຊວງການເງິນ**

- ສະເໜີໃຫ້ບັນດາກອງເລຂາໜ່ວຍງານຂະແໜງການຊຸກຍູ້ໜ່ວຍງານຂະແໜງການຍ່ອຍຂອງຕົນ ດຳເນີນການປຶກສາຫາລື ແລະລາຍງານໃຫ້ໜ່ວຍງານຂະແໜງການເປັນປະຈຳ. ກວດຄືນການເຄື່ອນໄຫວຂອງໜ່ວຍງານຂະແໜງການຍ່ອຍ ຖ້າຫາກມີໜ່ວຍງານຂະແໜງການຍ່ອຍໃດບໍ່ໄດ້ເຄື່ອນໄຫວ ໃຫ້ລາຍງານມາຍັງກອງເລຂາຂະບວນການໂຕະມົນ;
- ໃນການກະກຽມກອງປະຊຸມໂຕະມົນລະດັບສູງ ຈະມີການຈັດກອງປະຊຸມປຶກສາຫາລືໃນ 2 ຫົວຂໍ້ບູລິມະສິດ (ການສ້າງເສດຖະກິດເປັນເຈົ້າຕົນເອງ ແລະ ການພັດທະນາຊັບພະຍາກອນມະນຸດ) ເພື່ອກະກຽມເນື້ອໃນໃສ່ກອງປະຊຸມໂຕະມົນລະດັບສູງ ເຊິ່ງ 2 ກອງປະຊຸມນີ້ສະເໜີໃຫ້ຈັດຂຶ້ນໃນເດືອນຕຸລາ 2025.

**2.2 ກົມອົງການຈັດຕັ້ງສາກົນ, ກະຊວງການຕ່າງປະເທດ**

- ສະເໜີກອງເລຂາຂະບວນການໂຕະມົນສົ່ງເອກະສານທາງການໃຫ້ກັບໜ່ວຍງານຂະແໜງການ ເພື່ອໃຫ້ສົ່ງບົດລາຍງານໜ່ວຍງານຂະແໜງການ ເປັນທາງການ;ໃນວາລະກອງປະຊຸມໂຕະມົນລະດັບສູງ ຈະມີການນຳສະເໜີຄວາມຄືບໜ້າກ່ຽວກັບການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ເຊິ່ງໃນຄວາມເປັນຈິງແລ້ວທ່າອ່ຽງຂອງທຶນຊ່ວຍເຫຼືອທາງການເພື່ອການພັດທະນາແມ່ນຫຼຸດລົງຢ່າງຕໍ່ເນື່ອງ ການຫຼຸດພົ້ນອອກຈາກ ຫຼືຈະຢູ່ໃນສະຖານະພາບປະເທດດ້ອຍພັດທະນາ ທຶນຊ່ວຍເຫຼືອທາງການເພື່ອການພັດທະນາກໍຍັງຈະຫຼຸດລົງຕໍ່ເນື່ອງ. ສະນັ້ນ,ການໃຫ້ຄູ່ຮ່ວມພັດທະນາເຂົ້າຮ່ວມບັນດາກິດຈະກຳຕ່າງໆຂອງວຽກງານພັດທະນາ ຖືເປັນສິ່ງສຳຄັນໃນການສ້າງແຮງຈູງໃຈເພື່ອລະດົມທຶນ;
- ສຳລັບບັດເຊີນກອງປະຊຸມໂຕະມົນລະດັບສູງ ທີ່ຈະຈັດຂຶ້ນໃນວັນທີ 19 ພະຈິກ 2025 ແມ່ນເຊັນຮຽບຮ້ອຍແລ້ວ.

**3. ການອັບເດດຂໍ້ມູນເຂົ້າໃນເວັບໄຊ໋ໂຕະມົນ**

ໃນພາກບ່າຍກອງປະຊຸມໄດ້ມີການນຳສະເໜີຂອງກົມຮ່ວມມື ແລະ ການເງິນສາກົນ ກ່ຽວກັບການປັບປຸງຂໍ້ຕົກລົງ ຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ ແລະ ການສະໜອງຂໍ້ມູນ ເຂົ້າໃນເວບໄຊສ໌ ຂະບວນການໂຕະມົນ ໂດຍສະເພາະແມ່ນບັນດາຂໍ້ມູນທີ່ຕິດພັນກັບໜ່ວຍງານຂະແໜງການ ແລະ ກອງປະຊຸມໂຕະມົນລະດັບສູງ. ພາຍຫຼັງການນຳສະເໜີ, ປະທານໄດ້ເປີດເວລາສົນທະນາເພື່ອໃຫ້ຜູ້ເຂົ້າຮ່ວມປະກອບຄຳເຫັນ ເຊິ່ງສາມາດສະຫຼຸບຫຍໍ້ໄດ້ດັ່ງນີ້:

**3.1 ກົມອົງການຈັດຕັ້ງສາກົນ, ກະຊວງການຕ່າງປະເທດ**

- ຈະສະໜອງຂໍ້ມູນກ່ຽວກັບເປົ້າໝາຍພັດທະນາແບບຍືນຍົງແຫ່ງຊາດ ທີ່ຍັງບໍ່ທັນອັບເດດໃຫ້ກັບກອງເລຂາຂະບວນການໂຕະມົນ ຕື່ມອີກ;

- ສະເໜີໃຫ້ມີການເຊື່ອມລະຫວ່າງເວັບໄຊ໌ໂຕະມົນກັບບັນດາເວັບໄຊ໌ຂອງໜ່ວຍງານຂະແໜງການຕື່ມອີກ ເຊັ່ນ: SDG, NRA.

### 3.2 ໜ່ວຍງານຂະແໜງການການຄ້າ ແລະ ພັດທະນາພາກເອກະຊົນ

- ສະເໜີໃຫ້ກອງເລຂາຂະບວນການໂຕະມົນ ສົ່ງເອກະສານເປັນລາຍການບັນດາຂໍ້ມູນທີ່ຕ້ອງການອັບເດດໃຫ້ກັບບັນດາໜ່ວຍງານຂະແໜງການ ເພື່ອໃຫ້ສາມາດສະໜອງຂໍ້ມູນໃຫ້ໄດ້ຄົບຖ້ວນ.

## III. ສະຫຼຸບ ແລະ ທິດທາງ

⇒ ກອງເລຂາຂະບວນການໂຕະມົນ ນຳສົ່ງເອກະສານທາງການໃຫ້ກັບບັນດາໜ່ວຍງານຂະແໜງການປະກອບເອກະສານກ່ຽວກັບການກະກຽມກອງປະຊຸມໂຕະມົນ ໃຫ້ກັບກອງເລຂາ ລວມທັງການກະກຽມຕັ້ງບູດວາງສະແດງຂອງໜ່ວຍງານຂະແໜງການ ໃນກອງປະຊຸມໂຕະມົນລະດັບສູງ;

⇒ ການນຳສະເໜີຮ່າງທີ 5 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 10 ທີ່ກອງປະຊຸມໂຕະມົນລະດັບສູງ ຈະເປັນຮ່າງສຸດທ້າຍກ່ອນການອະນຸມັດຮັບຮອງໃນຕົ້ນປີ 2026;

⇒ ສຳລັບການນຳສະເໜີຄວາມຄືບໜ້າກ່ຽວກັບການຫຼຸດພົ້ນ ອອກຈາກສະຖານະພາບປະເທດດ້ອຍພັດທະນາ ຫຼືການຈັດຕັ້ງປະຕິບັດຄຳແນະນຳໃນບົດລາຍງານແຫ່ງຊາດແບບສະໝັກໃຈ ຄັ້ງທີ 3 (VNR3) ແມ່ນໃຫ້ພາກສ່ວນກ່ຽວຂ້ອງປຶກສາຫາລືກັນຕື່ມ;

⇒ ໃນກອງປະຊຸມໂຕະມົນລະດັບສູງ ຈະມີການນຳສະເໜີກະແຫຼງການວຽງຈັນ ແລະ ແຜນດຳເນີນງານສະບັບໃໝ່;

⇒ ເຫັນດີໃຫ້ກອງເລຂາຂະບວນການໂຕະມົນ ເປັນເຈົ້າການ ໃນການຈັດກອງປະຊຸມກັບບັນດາໜ່ວຍງານຂະແໜງການໃນການປັບປຸງກົນຈັກການຈັດຕັ້ງຂອງໜ່ວຍງານຂະແໜງການ ພາຍຫຼັງທີ່ມີການໂຮມບັນດາກະຊວງ;

⇒ ໃຫ້ບັນດາໜ່ວຍງານຂະແໜງການກວດຄືນເນື້ອໃນສະພາບລວມຂອງໜ່ວຍງານຂະແໜງການໃນເວັບໄຊ໌ໂຕະມົນ ແລ້ວສະໜອງຂໍ້ມູນອັບເດດໃຫ້ກັບກອງເລຂາຂະບວນການໂຕະມົນ, ສ່ວນຂໍ້ມູນອື່ນໆ ທີ່ເປັນລະອຽດ ແມ່ນໃຫ້ກອງເລຂາຂະບວນການໂຕະມົນ ສົ່ງເອກະສານລາຍການ ໃຫ້ກັບບັນດາໜ່ວຍງານຂະແໜງການ ເພື່ອໃຫ້ສາມາດປະກອບຂໍ້ມູນກັບມາໃຫ້ກອງເລຂາຂະບວນການໂຕະມົນ ໃຫ້ຄົບຖ້ວນ;

⇒ ການປະສານງານລະຫວ່າງໜ່ວຍງານຂະແໜງການ ແລະ ກອງເລຂາຂະບວນການໂຕະມົນ ແມ່ນໃຫ້ນຳໃຊ້ກົນໄກເດີມ ຄືການປະສານງານລະຫວ່າງກອງເລຂາໜ່ວຍງານຂະແໜງການ ແລະ ກອງເລຂາຂະບວນການໂຕະມົນ.

ດັ່ງນັ້ນ, ຈຶ່ງຮຽນສະເໜີລາຍງານມາຍັງທ່ານເພື່ອຊາບ ແລະ ມີທິດຊີ້ນຳຕາມທາງຄວນດ້ວຍ.

**ຫົວໜ້າກົມ,**
**ຫົວໜ້າກອງເລຂາຄະນະຊີ້ນຳລະດັບຊາດ**
**ເພື່ອຂະບວນການໂຕະມົນ**